# ຂ່າວປະຈຳໄຕມາດ I
## ສສສຄ




## ປະຊຸມຄະນະບໍລິຫານ ສສສຄ

ໃນວັນທີ 20 ມີນາ 2023 ເວລາ 9:00 ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ), ໄດ້ມີການຈັດປະຊຸມ ປະຈຳໄຕມາດທີ່ໜຶ່ງຂອງ ຄະນະບໍລິຫານງານ ສສສຄ, ພາຍໃຕ້ການ ນຳພາຂອງ ດຣ ຈັນສີ ພິມພະຈັນ ປະທານ ສສສຄ, ພາຍຫລັງປະທານ ໄດ້ກ່າວເປີດກອງ ປະຊຸມ ຢ່າງເປັນທາງການ, ດຣ. ສຸພົນ ໄຊຍະວົງ ຜູ້ອຳນວຍການ ສສສຄ ໄດ້ຜ່ານວາລະ ກອງປະຊຸມ ແລະ ນຳສະເໜີ ຜົນໄດ້ຮັບ ໃນການຈັດ ຕັ້ງປະຕິບັດໃນໄຕມາດ 1, ພ້ອມດ້ວຍ ທີມງານ ສສສຄ, ເພື່ອລາຍງານ ຜົນໄດ້ຮັບ ໃນການຈັດຕັ້ງ ປະຕິບັດວຽກງານ ໃນໄຕມາດ ທີໜຶ່ງ, ສົນທະນາ ແລະ ປຶກສາຫາລື ໃຫ້ເປັນເອກະພາບກັນ ກ່ຽວກັບບັນຫາ ທີ່ ກ່ຽວຂ້ອງ ທີ່ຍົກຂຶ້ນມາ ໃນກອງປະຊຸມ

## ສສສຄ ມອບຂອງຂວັນໃຫ້ພະນັກງານ ໃນວັນແມ່ຍິງສາກົນ




## ສສສຄ ຮ່ວມວາງສະແດງ ໃນງານບໍລິຈາກເລືອດ ທີ່ ມຊ



## ສສສຄ ຢ້ຽມຢາມ ແລະ ສ້າງເຄືອຂ່າຍຮ່ວມກັບ APL+



# ກອງປະຊຸມປຶກສາຫາລື ແລະ ເຄືອຂ່າຍຕ້ານຄວາມຮຸນແຮງ

ໃນລະຫວ່າງວັນທີ **24 - 27** ມັງກອນ **2023** ທີ່ຜ່ານມາ. ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ) ຮ່ວມກັບ ຫ້ອງການສາທາລະນະສຸກເມືອງປາກທາ, ເມືອງຜາອຸດົມ ແຂວງ ບໍ່ແກ້ວ ແລະ ຫ້ອງການສາທາລະນະສຸກເມືອງວຽງພູຄາ, ເມືອງ ນາແລ ແຂວງ ຫຼວງນໍ້າທາ  ໄດ້ຈັດກອງປະຊຸມ " ກອງປະຊຸມ ປຶກສາຫາລື ແລະ ການຕິດຕາມກ່ຽວກັບເຄືອຂ່າຍ ຕ້ານຄວາມ ຮຸນແຮງຢູ່ຂັ້ນເມືອງ " ພ້ອມດ້ວຍຄູ່ຮ່ວມງານຂັ້ນເມືອງ ເຊັ່ນ: ປກສ ເມືອງ, ສະຫະພັນຍິງເມືອງ, ຍຸດຕິທໍາເມືອງ, ໄອຍະການ ເມືອງ, ສານຂັ້ນຕົ້ນເມືອງ ແລະ ສຶກສາເມືອງ ທີ່ເປັນຄູຮ່ວມງານ ຂອງໂຄງການເຊື່ອມສານແມ່ປອດໄພ ແລະ ໂຄງການຕອບ ສະໜອງ **(RESPOND).**

# ຜູ້ເຂົ້າຮ່ວມທັງໝົດ: **44** ທ່ານ, ຍິງ **17** ທ່ານ
# ສະຖານທີ່: ຫ້ອງປະຊຸມຫ້ອງການສາທາລະນະສຸກເມືອງ ປາກທາ ແຂວງ ບໍ່ແກ້ວ ແລະ ທີ່ ຫ້ອງປະຊຸມສະໂມສອນ ເມືອງ ວຽງພຸຄາ ແຂວງ ຫຼວງນໍ້າທາ
# ຈຸດປະສົງ:

• ເພື່ອສືບຕໍ່ອັບເດດຄວາມຄືບໜ້າຈາກກອງປະຊຸມຄັ້ງກ່ອນ ໃນວັນທີ່ **15/07/2022**

• ເພື່ອສົນທະນາແລກປ່ຽນວາງແຜນກ່ຽວກັບການຊ່ວຍເຫລືອ ແລະ ສົ່ງຕໍ່ກໍລະນີຖືກຄວາມຮຸນແຮງໃຫ້ເຂົ້າເຖິງ ການ ຊ່ວຍເຫລືອທາງກົດໝາຍ, ການຊ່ວຍເຫລືອທາງສັງຄົມ ແລະ ສຸຂະພາບ.










# ໄດ້ຮັບທຶນສະໜັບສະໜູນໂດຍສະຫະພາບເອີຣົບໃນ ສປປ ລາວ MOU ກັບກະຊວງສາທາລະນະສຸກ – ກົມຄວບຄຸມພະຍາດຕິດຕໍ່. ຈັດຕັ້ງປະຕິບັດຮ່ວມກັນໂດຍ: ອົງການ Plan ສາກົນ ເຢຍລະມັນ - Plan ລາວ, ສະມາຄົມສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ (CHias), ສະມາຄົມພັດທະນາກະສິກໍາ ແລະສິ່ງແວດລ້ອມແບບຍືນຍົງ (SAEDA), ຮ່ວມມືກັນຢ່າງໃກ້ຊິດກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງອື່ນໆ ແລະ ຄະນະສະເພາະກິດ ຂອງ ລັດຖະບານ, ປະສານງານຜ່ານ LCCO.




# ມອບລົດໄຟຟ້າໃຫ້ສາຂາບໍ່ແກ້ວ

ໃນວັນທີ 27 ກຸມພາ 2023 ສສສຄ ສາຂາແຂວງບໍ່ແກ້ວ ໄດ້ຮັບລົດໄຟຟ້າ BYD E2 ຈໍານວນ 1 ຄັນ ໂດຍຜ່ານ ສສສຄ  ນະຄອນຫຼວງ ວຽງຈັນ ທີ່ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກບໍລິສັດ ເຄບີ ແຄັບປີທັລ ຮ່ວມ ກັບ ບໍລິສັດເຄບີໂຄລາວເຊົ່າສິນເຊື່ອ, ໃນມູນຄ່າ 35, 000, 000 KRW (35,000,000 ວອນ) ຕ່າງໜ້າມອບ-ຮັບໂດຍ ທ່ານ ອານຸສິນ ສັກປະ ເສີດ ອໍານວຍການ ສສສຄ ສາຂາແຂວງບໍ່ແກ້ວ ແລະ ມອບໂດຍ ທ່ານ ຄໍາແສນ ຫຼວງລາດ ຜູ້ຊ່ວຍບໍລິຫານຫ້ອງການ ສສສຄ ນຄຫຼ. ທ່ານ ອານຸສິນ ໄດ້ກ່າວວ່າຮູ້ສຶກຍິນດີຫຼາຍທີ່ໄດ້ຮັບການຊ່ວຍເຫຼືອລົດໃນຄັ້ງນີ້  ຕ້ອງຂອບໃຈມາຍັງນໍາບໍລິສັດ ແລະ ສສສຄນຄຫຼ ທີ່ເລັ່ງເຫັນຄວາມສໍາຄັນ. ລົດຄັນດັ່ງກ່າວແມ່ນຈະນໍາໃຊ້ເຂົ້າໃນວຽກງານບໍລິຫານຫ້ອງການ ເພື່ອເປັນ ການຊ່ວຍປະຫຍັດເລື່ອງຄ່າໃຊ້ຈ່າຍ ໂດຍສະເພາະກໍ່ແມ່ນຄ່ານໍ້າມັນ ແລະ ຍັງເປັນການອະນຸລັກສະພາບແວດລ້ອມ.

# EU visit

ໃນລະຫວ່າງ ວັນທີ່ 15 ກຸມພາ 2023 ສະມາຄົມສົ່ງເສີມສຸຂະພາບຄອບຄົວ ໃນນາມໂຄງການ ຮ່ວມແຮງຮ່ວມໃຈ ຕ້ານ ແລະ ສະກັດກັ້ນພະຍາດໂຄວິດ-19 ໃນເຂດທີມີຄວາມສ່ຽງ. ໄດ້ຈັດກິດຈະກໍາ ການຕິດຕາມ ແລະ ແລກປ່ຽນ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດກິດຈະກໍາໂຄງການ CiSAC19 ເພື່ອຕ້ອນຮັບການແລກປ່ຽນບົດຮຽນກັນລະຫວ່າງອົງການຈັດຕັ້ງທາງສັງຄົມ ໃນ 4 ແຂວງພາກເໜືອທີມາຈາກ 10 ສະມາຄົມທີ່ໄດ້ຮັບທຶນຂະໜາດນ້ອຍໃນ ໂຄງການ CiSAC-19 ແລະ ຜູ້ຕາງໜ້າຈາກ ສະຫະພາບເອີຣົບ, ຄະນະ LCCC/LCCO, ເຊິ່ງໃນກິດຈະກໍາໄດ້ນໍາສະເໜີຜົນຂອງການຈັດຕັ້ງປະຕິບັດ ຈາກຕາງໜ້າກຸ່ມຜູ້ໄດ້ຮັບຜົນປະໂຫຍດຈາກບ້ານ ແລະ ໂຮງຮຽນເປົ້າໝາຍ ໂຄງການ ທີເມືອງວຽງພູຄາ ແຂວງຫຼວງນໍ້າທາ ພ້ອມທັງໄດ້ຢ້ຽມຊົມສວນຜັກ ສວນຄົວຂອງກຸ່ມເປົ້າໝາຍທີໄດ້ຮັບການສະໜັບສະໜູນຈາກໂຄງການ ແລະ ໃຫ້ຄໍາແນະນໍາເພີ່ມເຕີມກ່ຽວກັບການປູກຜັກສວນຄົວ.







# ດຣ. ສຸພົນ ໄຊຍະວົງ ຮ່ວມເປັນສັກຄີພະຍານເຊັນ MOU

ວັນທີ 10 ມີນາ 2023 ພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ຕາງໜ້າໂດຍ ພະແນກສຶກສາ ທິການ ແລະ ກິລາ ແຂວງບໍ່ແກ້ວ ແລະ ອົງການແພລນສາກົນ ປະຈຳ ສປປ ລາວ ໃນ ໂຄງການ " ຮ່າງກ່າຍຂອງຂ້ອຍ ອານາຄົດຂອງຂ້ອຍ (My Body My Future)" ທີ່ຫ້ອງປະຊຸມ ໂຮງແຮມ Crown Plaza, ນຄຫຼ. ໂດຍ ດຣ. ສຸພົນ ໄຊຍະວົງ ອຳນວຍການ ສສສຄ ເຂົ້າຮ່ວມ ເປັນສັກຂີ ພະຍານໃນຄັ້ງນີ້, ເຊິ່ງຄູ່ຮ່ວມງານຫຼັກໃນການຈັດ ຕັ້ງໂຄງ ການແມ່ນ: PFHA, GDA, PTBUL, ສະມາຄົມພັດທະນາແມ່ຍິງຄົນ ພິການ.



# ສສສຄ ຢ້ຽມຢາມ ແລະ ສ້າງເຄືອຂ່າຍໄວໜຸ່ມໃນໂຮງຮຽນ





ວັນທີ 27-28 ກຸມພາ ຫາ 6 ມີນາ 2023, ທີມງານ ສສສຄ ໄດ້ສຳ ເລັດ ການລົງຢ້ຽມຢາມ 5 ໂຮງຮຽນຄື: ໂຮງຮຽນ ມສ ຕານມີໄຊ, ມສ ດອນໜູນ, ມປ ບ້ານຫ້ອມ, ມສ ຈັນທະບູລີ ແລະ ມສ ສີມມະໂນ, ນຳ ພາທີມໂດຍ ດຣ ບົວວັນ ສົມສະໜິດ ຜູ້ບໍລິຫານ ວິຊາການ /ບໍລິການ ສຸຂະພາບ, ໂດຍມີຜູ້ເຂົ້າຮ່ວມທັງໝົດ 37 ທ່ານ ເປັນຍິງ 24 ທ່ານ, ຊາຍ 13 ທ່ານ.

ຈຸດປະສົງ:
1. ເພື່ອເຂົ້າພົບ ອຳນວຍການ, ຄະນະ ອາຈານ ແລະ ອາສາສະໝັກ 10 ໂຮງຮຽນມັດທະຍົມ ໃນນະຄອນຫຼວງ, ເພື່ອທົບທວນຄືນ ການຈັດ ຕັ້ງປະຕິບັດກິດຈະກຳ ໃນວຽກງານ ການສ້າງຄວາມອາດສາມາດ ກ່ຽວ ກັບສຸຂະພາບຈະເລີນພັນ ໃຫ້ກັບໄວໜຸ່ມ
2. ເພື່ອສົນທະນາ ແລະ ວາງແຜນ ໃນການດຳເນີນວຽກງານການໃຫ້ ຄຳ ປຶກສາ ແກ່ໄວໜຸ່ມ ແລະ ການເປັນເຄືອຂ່າຍໃນການສົ່ງຕໍ່.
3. ເພື່ອຂໍການແຕ່ງຕັ້ງ ຜູ້ປະສານງານຫຼັກ ຂອງວຽກງານການໃຫ້ຄຳ ປຶກສາ (ອາຈານ ແລະ ອາສາສະໝັກ)




# ຮັບຢາບຳລຸງແມ່ຖືພາ ຈາກ IPPF

ໃນວັນທີ 27 ກຸມພາ 2023 ທີ່ຜ່ານມາ
ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ), ໄດ້ໄປຮັບຢາ ແລະ ອຸປະກອນ ທີ່ນຳໃຊ້ເຂົ້າໃນວຽກງານ ການດູແລສຸຂະພາບ ແມ່ ແລະ ເດັກ, ຢາດັ່ງກ່າວມີມູນຄ່າລວມປະມານ 124,400 ໂດລາສະຫະລັດ ທີ່ສາງທ່ານາແລ້ງ ສປປ ລາວ, ເຊິ່ງໄດ້ຮັບ ການສະໜັບສະໜູນ ແລະ ຊ່ວຍເຫລືອລ້າຈາກ ສະຫະພັນວາງແຜນຄອບຄົວສາກົນ (IPPF), ສສສຄ ໄດ້ຮັບກຽດ ໃນການເປັນຂົວຕໍ່ ການນຳໄປບໍລິຈາກ ໃຫ້ແກ່ ໂຮງໝໍນ້ອຍ ໃນແຂວງເປົ້າໝາຍໂຄງການ ຂອງ ສສສຄ ແລະ 4 ໂຮງໝໍສູນກາງ ຢູ່ນະຄອນຫລວງວຽງຈັນ.
ສສສຄ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈຢ່າງສູງ ມາຍັງ ສະຫະພັນວາງແຜນຄອບຄົວສາກົນ (KoPHW, KOFIH,...) ແລະ ຮູ້ສຶກດີໃຈຫຼາຍ ທີ່ໄດ້ເປັນສ່ວນຫນຶ່ງ ໃນການຮັບມອບ ຢາ ແລະ ອຸປະກອນ ເຊິ່ງໄດ້ປະກອບສ່ວນ ໃນການດູແລ ສຸຂະພາບ ແມ່ ແລະ ເດັກ ໃນເຂດຊຸມຊົນ ຫ່າງໄກສອກຫລີກ ໃຫ້ສາມາດເຂົ້າເຖິງ ການບໍລິການ ທີ່ມີຄຸນນະພາບ ແລະ ຢານຳໃຊ້ທີ່ພຽງພໍ, ເພື່ອນຳເຂົ້າຢາ ຈາກປະເທດ ເດັນມາກ ແລະ ປະເທດຈີນ ແລະ ເພື່ອມອບຢາ ແລະ ອຸປະກອນ ທີ່ຈຳເປັນ ໃຫ້ກັບໂຮງຫມໍນ້ອຍ ໃນກຸ່ມເປົ້າຫມາຍ

# ສສສຄ ມອບຢາໃຫ້ 4 ໂຮງໝໍສູນກາງ







ສະມາຄົມສົ່ງເສີມສຸຂະພາບຄອບຄົວ (ສສສຄ), ໄດ້ສຳເລັດ ການໄປມອບຢາຈຳນວນຫນຶ່ງ ທີ່ນຳໃຊ້ເຂົ້າ ໃນວຽກງານ ການດູແລສຸຂະພາບ ແມ່ ແລະ ເດັກ ໃຫ້ 4 ໂຮງໝໍສູນກາງ ນະຄອນຫຼວງວຽງຈັນ. ເຊິ່ງຢາດັ່ງກ່າວ ມີມູນຄ່າລວມ ປະມານ 1,753,210,000 ກີບ, ເຊິ່ງໄດ້ຮັບ ການສະໜັບສະໜູນ ແລະ ຊ່ວຍເຫລືອລ້າຈາກ ສະຫະພັນວາງແຜນຄອບຄົວສາກົນ IPPF ແລະ (KoPHW, KOFIH, Community Chest of Korea )
ຕາງໜ້າ ສສສຄ ດຣ ສຸດທິສຸກ ອິນທະວິໄລ ຮອງອຳນວຍການ ສສສຄ ໄດ້ສຳເລັດການໄປມອບຢາ ໃຫ້ແກ່ 4 ໂຮງໝໍສູນກາງ ຢູ່ນະຄອນຫລວງວຽງຈັນຄື:
ໃນວັນທີ 7 ມີນາ 2023 ໄດ້ໄປມອບຢາໃຫ້ແກ່ ໂຮງໝໍເສດຖາ ຕາງໜ້າຮັບໂດຍ ທ່ານ ດຣ ວໍລະຈິດ ທິບພະກຸນ ຮອງອຳນວຍການໂຮງໝໍ
ໃນວັນທີ 9 ມີນາ 2023 ໄດ້ໄປມອບຢາໃຫ້ແກ່ ໂຮງໝໍແມ່ ແລະ ເດັກ ໜອງພະຍາ ຕາງໜ້າຮັບໂດຍ ທ່ານ ດຣ ຕຸ້ຍ ຈັນທະລັງສີ ຮອງອຳນວຍການໂຮງໝໍ
ໃນວັນທີ 10 ມີນາ 2023 ໄດ້ໄປມອບຢາໃຫ້ແກ່ ໂຮງໝໍມະໂຫສົດ ຕາງໜ້າຮັບໂດຍ ທ່ານ ດຣ ນາງ ໃຈສະຫວັນ ທຳມະວົງ ຕາງໜ້າພະແນກບໍລິຫານ ແລະ ແຜນການ, ໂຮງໝໍມິດຕະພາບ ຕາງໜ້າຮັບໂດຍ ທ່ານ ດຣ ເກດມະນີ ເພັດສີລິແສງ ຮອງອຳນວຍການໂຮງໝໍ
ສສສຄ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈຢ່າງສູງ ມາຍັງຜູ້ບໍລິຈາກຢາ ໃນຄັ້ງນີ້.
ຈຸດປະສົງ:
1. ເພື່ອມອບຢາ ທີ່ນຳໃຊ້ເຂົ້າໃນວຽກງານ ການດູແລສຸຂະພາບ ແມ່ ແລະ ເດັກ ໃຫ້ກັບ 4 ໂຮງໝໍສູນກາງ
2. ເພື່ອໃຫ້ໂຮງໝໍ ແຈກຢາຍຢາຟຣີ ໃຫ້ກັບຜູ້ມາໃຊ້ບໍລິການ ກ່ຽວກັບແມ່ ແລະ ເດັກ







# ຄະນະບໍລິຫານງານສສສຄ
















# ສສສຄ ຫຼື PFHA

## ສະມາຄົມສົ່ງເສີມສຸຂະພາບຄອບຄົວ ( ສສສຄ )

**The Promotion of Family Health Association ( PFHA )**

ຄືສະມາຄົມທີ່ບໍ່ຫວັງຜົນກຳໄລ **( Non Profit Association )** ຫຼື **( NPAs)**

ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນຢ່າງເປັນທາງການ ໃນວັນທີ **28** ມິຖຸນາ **2012** ສ້າງຂຶ້ນ

ເພື່ອປະກອບສ່ວນຕໍ່ເປົ້າໝາຍພັດທະນາແຫ່ງຊາດ ແລະ ລະດົມທຶນຊ່ວຍເຫຼືອໃຫ້ໄດ້ຫຼາຍ

ຂຶ້ນ ມີຂອບເຂດການເຄື່ອນໄຫວໄດ້ທົ່ວປະເທດ